ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ຊົມເຊີຍ ວັນແມ່ຍິງສາກົນ

ຄົບຮອບ 116 ປີ ຢ່າງສຸດໃຈ



ແດ່ແມ່ຍິງລາວທຸກທ່ານ -
ທີ່ເປັນກຳລັງແຮງ, ນຳພາ ແລະ ເປັນແຮງບັນດານໃຈໃຫ້ທຸກຮຸ່ນຄົນ

ທ່ານ ນ. ສາຍສະໝອນ ຈັນທະຈັກ
ຜູ້ອຳນວຍການ ທຄຕລ



Best Women Leader– Banking 2025,
awarded by **Women's Tabloid**, recognizing outstanding female leadership in banking worldwide.

ເນື່ອງໃນໂອກາດ ວັນແມ່ຍິງສາກົນ ທຄຕລ ຂໍຖືໂອກາດນີ້ເພື່ອຍ້ອງຍໍ ສັນລະເສີນແມ່ຍິງລາວບັນດາເຜົ່າ ທີ່ຍາມໃດກໍໄດ້ອຸທິດຕົນປະກອບສ່ວນ ຜົນງານໃນທຸກໜ້າທີ່ວຽກງານ ທັງ ການປະຕິບັດໜ້າທີ່ວິຊາສະເພາະ ລວມໄປເຖິງເປັນຫຼັກໃນສະຖາບັນ ຄອບຄົວ ດ້ວຍຄວາມຕັ້ງໃຈ ແລະ ຄວາມເສຍສະຫຼະ.

ພ້ອມດຽວກັນນັ້ນ, ທຄຕລ ມີຄວາມ ພາກພູມໃຈຢ່າງຍິ່ງຕໍ່ກັບ ທ່ານ ນາງ ສາຍສະໝອນ ຈັນທະຈັກ, ຜູ້ ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ ຜູ້ທີ່ໄດ້ຮັບ ລາງວັນ "ຜູ້ນຳແມ່ຍິງດີເດັ່ນ - ໃນ ຂົງເຂດທະນາຄານ ປະຈຳປີ 2025" ຈາກວາລະສານທຸລະກິດລະດັບໂລກ "Women's Tabloid" ໃນເດືອນ ມັງກອນ 2026 ທີ່ຜ່ານມາ ທີ່ເມືອງ Dubai.

ທຄຕລ ຍາມໃດກໍມຸ່ງໝັ້ນໃນການສ້າງ ສະພາບແວດລ້ອມການເຮັດວຽກທີ່ ໃຫ້ແມ່ຍິງທຸກຄົນມີໂອກາດໃນການ ເຕີບໃຫຍ່ໃນສາຍວຽກການນຳພາ ແລະ ສ້າງຄວາມປ່ຽນແປງ. ທຄຕລ ເຊື່ອໝັ້ນ ແລະ ຂໍສົ່ງເສີມຄວາມເທົ່າ ທຽມຂອງບົດບາດແມ່ຍິງໃນສັງຄົມ.

ເຖິງແມ່ຍິງລາວທຸກທ່ານ — ທຄຕລ ພູມໃຈທີ່ໄດ້ສະເຫຼີມສະຫຼອງຮ່ວມກັບບັນດາແມ່ຍິງທີ່ກຳລັງມີບົດບາດກຳນົດ ທິດທາງໃໝ່ໃນສັງຄົມ ໂດຍສະເພາະ ຂົງເຂດການເງິນ-ການທະນາຄານ ຢູ່ ສປປ ລາວ ແລະ ໃນທົ່ວພາກພື້ນ.

ຂໍຂອບໃຈສຳລັບຄວາມທຸ່ມເທ, ຄວາມເຂັ້ມແຂງ ແລະ ຄວາມເສຍສະຫຼະ.